ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---=== 000 ===---

ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ

ເລກທີ 013/ຄລຕ.

ນະຄອນຫຼວງວຽງຈັນ, ວັນທີ 19/05/2011

# ຂໍ້ຕົກລົງ
# ວ່າດ້ວຍລະບຽບຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ

- ອີງຕາມດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສະບັບເລກທີ 255/ນຍ, ລົງວັນທີ 24 ພຶດສະພາ 2010;
- ອີງຕາມການສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ຕໍ່ກອງປະຊຸມ ຄລຕ ຄັ້ງທີ VIII, ວັນທີ 29 ເມສາ 2011.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ອອກຂໍ້ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ຜັນຂະຫຍາຍ ມາດຕາ 3 ຂໍ້ 19, ມາດຕາ 42, 43 ແລະ 58 ຂອງດຳລັດວ່າຫຼັກຊັບ ແລະ ຕະຫຼາດຫຼັກຊັບ ເລກທີ 255/ນຍ, ລົງວັນທີ 24 ພຶດສະພາ 2010 ເພື່ອກຳນົດຫຼັກການໃນການຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ ແນ່ໃສ່ຮັບປະກັນການປະຕິບັດໜ້າທີ່ຂອງນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ສອດຄ່ອງກັບລະບຽບຫຼັກການ ແລະ ດ້ວຍຄວາມຮັບຜິດຊອບສູງ.

**ມາດຕາ 2. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ຕໍ່ບໍລິສັດຫຼັກຊັບ ແລະ ນັກວິຊາຊີບທຸລະກິດຫຼັກຊັບ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວ ຢູ່ ສປປ ລາວ.

## ໝວດທີ II
## ໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ

**ມາດຕາ 3. ໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ**

ໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ແມ່ນເອກະສານຢັ້ງຢືນ ທີ່ສຳນັກງານ ຄລຕ ອອກໃຫ້ແກ່ຜູ້ທີ່ມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ເພື່ອປະກອບອາຊີບທຸລະກິດຫຼັກຊັບ ນຳບໍລິສັດຫຼັກຊັບໃດໜຶ່ງ.

ໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ປະກອບດ້ວຍ ສາມ ປະເພດ ດັ່ງນີ້:

1. ປະເພດນາຍໜ້າຊື້-ຂາຍຫຼັກຊັບ;
2. ປະເພດທີ່ປຶກສາທາງດ້ານການເງິນກ່ຽວກັບຫຼັກຊັບ;
3. ປະເພດນັກວິເຄາະຫຼັກຊັບ.

**ມາດຕາ 4. ປະເພດນາຍໜ້າຊື້-ຂາຍຫຼັກຊັບ**

ຜູ້ທີ່ໄດ້ຮັບໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ປະເພດນາຍໜ້າຊື້-ຂາຍຫຼັກຊັບ ສາມາດເຄື່ອນໄຫວ ດັ່ງນີ້:

1. ບໍລິການຮັບຄຳສັ່ງຊື້-ຂາຍຫຼັກຊັບໃຫ້ແກ່ລູກຄ້າ;
2. ໃຫ້ຄຳປຶກສາດ້ານການລົງທຶນໃນຫຼັກຊັບໃຫ້ແກ່ລູກຄ້າ;
3. ຊື້-ຂາຍຫຼັກຊັບໃນນາມບໍລິສັດຫຼັກຊັບທີ່ຕົນສັງກັດ.

ນາຍໜ້າຊື້-ຂາຍຫຼັກຊັບ ທີ່ໃຫ້ບໍລິການຮັບຄຳສັ່ງຊື້-ຂາຍຫຼັກຊັບໃຫ້ແກ່ລູກຄ້າ ບໍ່ສາມາດປະຕິບັດໜ້າທີ່ຊື້-ຂາຍຫຼັກຊັບໃນນາມບໍລິສັດຫຼັກຊັບທີ່ຕົນສັງກັດ. ກໍລະນີ ບໍລິສັດຫຼັກຊັບ ຕ້ອງການປັບປ່ຽນໜ້າທີ່ຮັບຜິດຊອບຂອງຜູ້ກ່ຽວ ຕ້ອງລາຍງານໃຫ້ແກ່ ສຳນັກງານ ຄລຕ ຢ່າງເປັນລາຍລັກອັກສອນ.

**ມາດຕາ 5. ປະເພດທີ່ປຶກສາທາງດ້ານການເງິນກ່ຽວກັບຫຼັກຊັບ**

ຜູ້ທີ່ໄດ້ຮັບໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບປະເພດທີ່ປຶກສາທາງດ້ານການເງິນກ່ຽວກັບຫຼັກຊັບ ສາມາດເຄື່ອນໄຫວໄດ້ຕາມທີ່ໄດ້ກຳນົດໃນຂໍ້ 1 ຫຼື ຂໍ້ 2 ຂອງມາດຕາ 32 ຂອງຂໍ້ຕົກລົງວ່າດ້ວຍລະບຽບກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ ເລກທີ 009/ຄລຕ, ລົງວັນທີ 21 ກໍລະກົດ 2010. ກໍລະນີ ບໍລິສັດຫຼັກຊັບ ຕ້ອງການປັບປ່ຽນໜ້າທີ່ຮັບຜິດຊອບຂອງຜູ້ກ່ຽວ ຕ້ອງລາຍງານໃຫ້ແກ່ ສຳນັກງານ ຄລຕ ຢ່າງເປັນລາຍລັກອັກສອນ.

**ມາດຕາ 6. ປະເພດນັກວິເຄາະຫຼັກຊັບ**

ຜູ້ທີ່ໄດ້ຮັບໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ປະເພດນັກວິເຄາະຫຼັກຊັບ ສາມາດຄົ້ນຄວ້າ, ວິເຄາະຫຼັກຊັບ ແລະ ສະພາບການເຄື່ອນໄຫວຂອງບໍລິສັດອອກຫຼັກຊັບ.

**ມາດຕາ 7. ເງື່ອນໄຂໃນການອອກໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ**

ບຸກຄົນ ທີ່ຈະໄດ້ຮັບໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ນອກຈາກມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງດຳລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບແລ້ວ ຕ້ອງມີເງື່ອນໄຂ ເພີ່ມເຕີມ ດັ່ງນີ້:

1. ມີໃບຢັ້ງຢືນສອບເສັງຜ່ານຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບລະດັບ I ສຳລັບປະເພດນາຍໜ້າຊື້-ຂາຍຫຼັກຊັບ;
2. ມີໃບຢັ້ງຢືນສອບເສັງຜ່ານຫຼັກສູດນັກວິຊາຊີບທຸລະກິດຫຼັກຊັບລະດັບ II ສຳລັບປະເພດທີ່ປຶກສາທາງດ້ານການເງິນກ່ຽວກັບຫຼັກຊັບ ແລະ ປະເພດນັກວິເຄາະຫຼັກຊັບ.

**ມາດຕາ 8. ສຳນວນຄຳຮ້ອງຂໍໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ**

ສຳນວນຄຳຮ້ອງຂໍໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ປະກອບດ້ວຍເອກະສານ ດັ່ງນີ້:

1. ໃບຄຳຮ້ອງສະເໜີຂໍໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ຕາມແບບພິມຂອງສຳນັກງານ ຄລຕ;
2. ຊີວະປະຫວັດຫຍໍ້;
3. ໃບຢັ້ງຢືນທີ່ຢູ່;
4. ສຳເນົາບັດປະຈຳຕົວ ຫຼື ສຳເນົາໜັງສືຜ່ານແດນ;
5. ໃບແຈ້ງໂທດ ບໍ່ໃຫ້ກາຍ 3 ເດືອນ;
6. ຮູບຖ່າຍ ບໍ່ເກີນ 3 ເດືອນ ຂະໜາດ 3x4 ຈຳນວນ 3 ໃບ;
7. ສຳເນົາໃບປະກາດສະນີຍະບັດ ແລະ ໃບຄະແນນ;
8. ສຳເນົາໃບຢັ້ງຢືນການເສັງຜ່ານຫຼັກສູດວິຊາຊີບທຸລະກິດຫຼັກຊັບ ແລະ ໃບຄະແນນ;
9. ສັນຍາແຮງງານລະຫວ່າງຜູ້ຮ້ອງຂໍກັບບໍລິສັດຫຼັກຊັບ;
10. ສຳລັບຄົນຕ່າງປະເທດ ທີ່ມີໃບຢັ້ງຢືນທຸລະກິດຫຼັກຊັບຈາກຕ່າງປະເທດ ຕ້ອງໄດ້ຜ່ານການສອບເສັງຜ່ານລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປ ລາວ ຈຶ່ງໄດ້ຮັບໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ຈາກສຳນັກງານ ຄລຕ.

**ມາດຕາ 9. ການພິຈາລະນາສຳນວນຄຳຮ້ອງ**

ສຳນັກງານ ຄລຕ ຕ້ອງພິຈາລະນາອອກໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ພ້ອມດ້ວຍລະຫັດໃຫ້ຜູ້ຮ້ອງຂໍ ພາຍໃນ ສິບ ວັນລັດຖະການ ນັບແຕ່ວັນໄດ້ຮັບສຳນວນຄຳຮ້ອງຖືກຕ້ອງ ແລະ ຄົບຖ້ວນເປັນຕົ້ນໄປ. ໃນກໍລະນີ ປະຕິເສດ ສຳນັກງານ ຄລຕ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບຢ່າງເປັນລາຍລັກອັກສອນພ້ອມດ້ວຍເຫດຜົນ.

**ມາດຕາ 10. ອາຍຸຂອງໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ**

ໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ມີອາຍຸ ສາມ ປີ ນັບແຕ່ວັນທີ່ອອກໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບເປັນຕົ້ນໄປ. ກ່ອນໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ໝົດອາຍຸ ສາມ ເດືອນ ບໍລິສັດຫຼັກຊັບ ຕ້ອງຍື່ນໃບສະເໜີຂໍຕໍ່ອາຍຸໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ຕໍ່ສຳນັກງານ ຄລຕ.

ຜູ້ຮ້ອງຂໍຕໍ່ອາຍຸໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ຕ້ອງເຂົ້າຮ່ວມຫຼັກສູດການຝຶກອົບຮົມຕາມການກຳນົດຂອງ ສຳນັກງານ ຄລຕ ແລະ ຕ້ອງປະກອບສຳນວນຄຳຮ້ອງ ຕາມການກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 11. ຄ່າທຳນຽມ**

ຜູ້ຮ້ອງຂໍອອກໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ຕ້ອງເສຍຄ່າທຳນຽມໃຫ້ແກ່ ສຳນັກງານ ຄລຕ ດັ່ງນີ້:

1. ໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ 5.000.000 ກີບ ແລະ ຕ້ອງຊຳລະເງິນ ກ່ອນວັນທີ່ສຳນັກງານ ຄລຕ ອອກໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ;

2. ຕໍ່ໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ 2.000.000 ກີບ ແລະ ຕ້ອງຊໍາລະເງິນ ກ່ອນວັນ ທີ່ສໍານັກງານ ຄລຕ ອອກໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ.

**ມາດຕາ 12. ການຖອນໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ**

ນັກວິຊາຊີບທຸລະກິດຫຼັກຊັບ ຈະຖືກຖອນໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຖືກຖອນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 43 ຂອງດໍາລັດວ່າດ້ວຍຫຼັກຊັບ ແລະ ຕະຫຼາດຫຼັກຊັບ;
2. ລະເມີດຂໍ້ຫ້າມຕາມທີ່ໄດ້ກໍານົດໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້;
3. ຖືກປົດອອກຈາກບໍລິສັດຫຼັກຊັບ ຫຼື ຍ້າຍອອກຈາກບໍລິສັດຫຼັກຊັບໜຶ່ງ ເພື່ອໄປເຮັດວຽກຢູ່ບໍລິສັດຫຼັກຊັບອື່ນ.

**ມາດຕາ 13. ການອອກໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບຄືນໃໝ່**

ສໍານັກງານ ຄລຕ ຈະພິຈາລະນາອອກໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບຄືນໃໝ່ ສະເພາະແຕ່ກໍລະນີທີ່ນັກວິຊາຊີບທຸລະກິດຫຼັກຊັບ ຍ້າຍອອກຈາກບໍລິສັດຫຼັກຊັບໜຶ່ງ ເພື່ອໄປເຮັດວຽກຢູ່ບໍລິສັດຫຼັກຊັບອື່ນເທົ່ານັ້ນ.

ຜູ້ສະເໜີຂໍອອກໃບຢັ້ງຢືນຄືນໃໝ່ ຕ້ອງປະຕິບັດຕາມເງື່ອນໄຂທີ່ໄດ້ກໍານົດໄວ້ໃນມາດຕາ 8 ແລະ 11 ຂອງຂໍ້ຕົກລົງສະບັບນີ້.

## ໝວດທີ III
## ຂໍ້ຫ້າມຂອງນັກວິຊາຊີບທຸລະກິດຫຼັກຊັບ ແລະ ພັນທະຂອງບໍລິສັດຫຼັກຊັບ

**ມາດຕາ 14. ຂໍ້ຫ້າມ**

ຫ້າມນັກວິຊາຊີບທຸລະກິດຫຼັກຊັບ ເຄື່ອນໄຫວ ດັ່ງນີ້:

1. ເປີດເຜີຍ ແລະ ສະໜອງຂໍ້ມູນ ທີ່ບໍ່ຖືກຕ້ອງກັບຄວາມເປັນຈິງ ຫຼື ຂໍ້ມູນບໍ່ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກພາກສ່ວນທີ່ກ່ຽວຂ້ອງແກ່ລູກຄ້າ;
2. ໃຫ້ຄໍາແນະນໍາ ທີ່ອາດເຮັດໃຫ້ນັກລົງທຶນເຂົ້າໃຈຜິດ ແລະ ສົ່ງຜົນຕໍ່ການຕັດສິນໃຈຊື້-ຂາຍຫຼັກຊັບຂອງລູກຄ້າ;
3. ຮັບປະກັນຕໍ່ຜູ້ລົງທຶນກ່ຽວກັບຜົນຕອບແທນ, ຜົນຂາດທຶນ ຫຼື ຄວາມເສຍຫາຍທີ່ອາດຈະເກີດຈາກການຊື້-ຂາຍຫຼັກຊັບ;
4. ໃຫ້ຄໍາແນະນໍາໃນລັກສະນະທີ່ເປັນການຊັກຊວນ ຫຼື ສະໜັບສະໜູນ ໃຫ້ແກ່ລູກຄ້າຊື້-ຂາຍຫຼັກຊັບ ຫຼື ເລັ່ງລັດການຕັດສິນໃຈຂອງລູກຄ້າ;
5. ຮັບຄໍາສັ່ງຊື້-ຂາຍຫຼັກຊັບກັບລູກຄ້າຜ່ານໂທລະສັບມືຖື;
6. ຮັບມອບສິດຈາກລູກຄ້າ ຫຼື ຕັດສິນໃຈແທນໃນການຊື້-ຂາຍ ຫຼື ໂອນຫຼັກຊັບ;
7. ສວຍໃຊ້ ສິດ ແລະ ໜ້າທີ່ ເພື່ອສະແຫວງຫາຜົນປະໂຫຍດຈາກລູກຄ້າ;

8. ຍັກຍອກ ຫຼື ສໍ້ໂກງຊັບສິນຂອງລູກຄ້າ ແລະ ນໍາຫຼັກຊັບ ຫຼື ເງິນຂອງລູກຄ້າໄປໃຊ້ເພື່ອຜົນປະໂຫຍດຂອງຕົນ ຫຼື ບຸກຄົນອື່ນ;
9. ຊື້ ຫຼື ຂາຍຫຼັກຊັບ ເພື່ອຕົນເອງ, ບໍລິສັດຫຼັກຊັບ ຫຼື ບຸກຄົນອື່ນໃນລັກສະນະ ທີ່ເປັນການເອົາປຽບລູກຄ້າ;
10. ຊື້-ຂາຍຫຼັກຊັບ ຫຼື ນໍາໃຊ້ບັນຊີເງິນຝາກ ຫຼື ບັນຊີຫຼັກຊັບຂອງລູກຄ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກລູກຄ້າ;
11. ຮ່ວມມືກັບລູກຄ້າໃນການຊື້-ຂາຍຫຼັກຊັບ ທີ່ບໍ່ຖືກຕ້ອງກັບລະບຽບໃນການຊື້-ຂາຍຫຼັກຊັບ;
12. ທວງເອົາເງິນ ຫຼື ຜົນປະໂຫຍດອື່ນນໍາລູກຄ້າ ນອກເໜືອຈາກລະບຽບການກໍານົດ;
13. ດໍາເນີນວິຊາຊີບທຸລະກິດຫຼັກຊັບ ໃຫ້ແກ່ບໍລິສັດຫຼັກຊັບອື່ນໃນຂະນະທີ່ເປັນພະນັກງານຂອງບໍລິສັດຫຼັກຊັບໜຶ່ງ.

**ມາດຕາ 15. ພັນທະຂອງບໍລິສັດຫຼັກຊັບ**

ບໍລິສັດຫຼັກຊັບ ມີພັນທະ ດັ່ງນີ້:

1. ແບ່ງງານ ແລະ ຄວາມຮັບຜິດຊອບໃຫ້ແກ່ນັກວິຊາຊີບທຸລະກິດຫຼັກຊັບ ໃຫ້ຖືກຕ້ອງກັບປະເພດຂອງໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ;
2. ສ້າງລະບຽບກ່ຽວກັບຫຼັກການ ໃນການປະຕິບັດໜ້າທີ່ຂອງນັກວິຊາຊີບທຸລະກິດຫຼັກຊັບແຕ່ລະປະເພດ;
3. ອອກບັດພະນັກງານ ໃຫ້ນັກວິຊາຊີບທຸລະກິດຫຼັກຊັບທຸກຄົນ ໂດຍລະບຸຊື່ ແລະ ນາມສະກຸນ, ຕໍາແໜ່ງ ພ້ອມດ້ວຍລະຫັດທີ່ອອກໃຫ້ໂດຍສໍານັກງານ ຄລຕ;
4. ຕິດຕາມກວດກາ ການປະຕິບັດວຽກງານຂອງນັກວິຊາຊີບທຸລະກິດຫຼັກຊັບ ຢ່າງເປັນປົກກະຕິ;
5. ແຈ້ງໃຫ້ສໍານັກງານ ຄລຕ ຊາບຢ່າງເປັນລາຍລັກອັກສອນ ພາຍໃນ ຊາວສີ່ ຊົ່ວໂມງ ໃນກໍລະນີທີ່ນັກວິຊາຊີບທຸລະກິດຫຼັກຊັບ ກະທໍາຜິດຫຼືລະເມີດລະບຽບການ ທີ່ກ່ຽວຂ້ອງ;
6. ລາຍງານໃຫ້ສໍານັກງານ ຄລຕ ຊາບຢ່າງເປັນລາຍລັກອັກສອນ ພາຍໃນ ຊາວສີ່ ຊົ່ວໂມງ ໃນກໍລະນີທີ່ມີການປ່ຽນແປງ ກ່ຽວກັບນັກວິຊາຊີບທຸລະກິດຫຼັກຊັບ ເຊັ່ນ: ການເຊັນ ຫຼື ຍົກເລີກສັນຍາແຮງງານ, ການລາອອກ, ການຍ້າຍສັງກັດ ແລະ ອື່ນໆ. ກໍລະນີລາອອກ ຫຼື ຍ້າຍບ່ອນເຮັດວຽກ ບໍລິສັດຫຼັກຊັບ ຕ້ອງສົ່ງໃບຢັ້ງຢືນວິຊາຊີບທຸລະກິດຫຼັກຊັບ ຄືນໃຫ້ສໍານັກງານ ຄລຕ ພາຍໃນ ຫ້າ ວັນລັດຖະການ ນັບແຕ່ວັນລາອອກ ຫຼື ຍ້າຍບ່ອນເຮັດວຽກ.

ໃນກໍລະນີ ບໍລິສັດຫຼັກຊັບ ບໍ່ປະຕິບັດຕາມການກໍານົດໃນ ມາດຕາ 15 ຂອງລະບຽບສະບັບນີ້ ຈະຖືກປະຕິບັດມາດຕະການຈາກ ສໍານັກງານ ຄລຕ ຕາມກໍລະນີເບົາ ຫຼື ໜັກ.

## ໝວດທີ IV
## ບົດບັນຍັດສຸດທ້າຍ

**ມາດຕາ 16. ການຈັດຕັ້ງປະຕິບັດ**

ສຳນັກງານ ຄລຕ, ບໍລິສັດຫຼັກຊັບ, ນັກວິຊາຊີບທຸລະກິດຫຼັກຊັບ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ ຂອງຕົນຢ່າງ ເຂັ້ມງວດ.

**ມາດຕາ 17. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ**

ສົມສະຫວາດ ເລັ່ງສະຫວັດ